STAY SAFE MN

# ຄວາມຈິງຂອງວັກຊີນໂຄວິດ-19

## ວັກຊີນໂຄວິດ-19 ແມ່ນຟຣີ.

ທ່ານຈະໄດ້ຮັບວັກຊີນ ເຖິງແມ່ນວ່າທ່ານຈະມີປະກັນໄພຫຼືບໍ່ມີກໍ່ຕາມ ຫຼື ສະຖານະເຂົ້າເມືອງຂອງທ່ານເປັນແນວໃດກໍ່ຕາມ.

## ວັກຊີນໂຄວິດ-19 ແມ່ນມີຄວາມປອດໄພ.

ມັນດຳເນີນຜ່ານທຸກຂັ້ນຕອນຂອງຄວາມປອດໄພຄືກັນກັບວັກຊີນຊະນິດອື່ນ.

## ວັກຊີນໂຄວິດ-19 ໄດ້ຮັບຜົນດີ.

ວັກຊີນແມ່ນດີຫຼາຍ ມັນຊ່ວຍປ້ອງກັນຄົນຈາກພະຍາດໂຄວິດ-19. ຖ້າທ່ານປ່ວຍຍ້ອນໂຄວິດ-19 ພາຍຫຼັງທີ່ໄດ້ຮັບຢາວັກຊີນ, ວັກຊີນຈະຊ່ວຍປ້ອງກັນທ່ານຈາກອາການປ່ວຍຂັ້ນຮຸນແຮງ ຫຼື ເຖິງຂັ້ນເຂົ້າໂຮງໝໍ. ມັນໃຊ້ເວລາສອງອາທິດຫຼັງຈາກທີ່ທ່ານໄດ້ຮັບເຂັມທີສອງ ໃນຊຸດຢາທີ່ຕ້ອງສັກສອງເຂັມ ຫຼື ເຂັມທຳອິດ ໃນຊຸດທີ່ຕ້ອງສັກໜຶ່ງເຂັມ ເພື່ອສ້າງພູມຄຸ້ມກັນໃຫ້ຮ່າງກາຍໃນການຕໍ່ສູ້ກັບໂຄວິດ-19. ຫຼັງຈາກນັ້ນສອງອາທິດ, ຖືວ່າທ່ານໄດ້ຮັບວັກຊີນຄົບແລ້ວ. ຜູ້ທີ່ຈະສັກຢາວັກຊີນໃຫ້ແກ່ທ່ານຈະບອກທ່ານວ່າທ່ານຕ້ອງການວັກຊີນຈັກເຂັມ ແລະ ເມື່ອໃດທີ່ຈະມາຮັບ. ນີ້ອາດຈະລວມມີເຂັມທີສາມ ຫຼື ເຂັມກະຕຸ້ນ. ມັນເປັນສິ່ງທີ່ສຳຄັນໃນການສັກຢາເພື່ອການປ້ອງກັນທີ່ດີທີ່ສຸດຂອງທ່ານ.

### ວັກຊີນ 2-ໂດສ໌




*ເຂັມທີສາມສຳລັບເງື່ອນໄຂບາງຢ່າງທີ່ເຮັດໃຫ້ລະບົບພູມຄຸ້ມກັນຕ່ຳລົງ ແລະ/ຫຼື ເຂັມກະຕຸ້ນສຳລັບບາງຄົນ.

### ວັກຊີນ 1-ໂດສ໌




MINNESOTA

**mn.gov/vaccine**

Minnesota Department of Health | health.mn.gov | 651-201-5000 | 625 Robert Street North PO Box 64975, St. Paul, MN 55164-0975
ຕິດຕໍ່ health.communications@state.mn.us ເພື່ອສະເໜີຂໍໃນຮູບແບບອື່ນ. | 10/5/2021 (Lao)